ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ..2663........./ຫອຄ.ຄພນ

ນະຄອນຫຼວງວຽງຈັນ, ວັນທີ 24 ມິຖຸນາ 2015.

# ແຈ້ງການ

ເຖິງ: - ທ່ານຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

- ຫົວໜ່ວຍທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ (ປ້ຳນ້ຳມັນຂາຍຍ່ອຍ) ພາຍໃນແຂວງ, ນະຄອນຫຼວງ.

ເລື່ອງ: ໃຫ້ຫົວໜ່ວຍທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ (ປ້ຳນ້ຳມັນຂາຍຍ່ອຍ) ມາປ່ຽນແປງເນື້ອໃນທະບຽນວິສາຫະກິດ ຫຼື ຂຶ້ນທະບຽນວິສາຫະກິດຄືນໃໝ່ໃຫ້ຖືກຕ້ອງ.

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ຂໍ້ຕົກລົງວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ສະບັບເລກທີ 1005 / ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015.

ເພື່ອໃຫ້ຫົວໜ່ວຍທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ (ປ້ຳນ້ຳມັນຂາຍຍ່ອຍ ) ຢູ່ ສປປ ລາວ ເຄື່ອນໄຫວດຳເນີນທຸລະກິດ ສອດຄ່ອງຕາມເນື້ອໃນ ຂອງຂໍ້ຕົກລົງສະບັບເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015 ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ.

**ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍແຈ້ງມາຍັງທ່ານດັ່ງນີ້:**

1. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ແຈ້ງໃຫ້ຫົວໜ່ວຍທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ (ປ້ຳນ້ຳມັນຂາຍຍ່ອຍ ) ພາຍໃນແຂວງ, ນະຄອນຫຼວງ ທີ່ມີການຈຳໜ່າຍເຄື່ອງອຸປະໂພກ, ບໍລິໂພກ ແລະ ເຄື່ອງທີ່ລະນຶກ ທີ່ເປັນລັກສະນະຮ້ານຄ້ານ້ອຍ ຫຼື ຮ້ານມິນິມາກ ພາຍໃນປ້ຳນ້ຳມັນຂອງຕົນ ໃຫ້ມາປ່ຽນແປງເນື້ອໃນໃບທະບຽນວິສາຫະກິດ ຫລື ຂຶ້ນທະບຽນວິສາຫະກິດຄືນໃໝ່ໃຫ້ຖືກຕ້ອງພາຍໃນກຳນົດເວລາ 90 ວັນ, ນັບແຕ່ມື້ອອກແຈ້ງການສະບັບນີ້ເປັນຕົ້ນໄປ;

2. ຖ້າຫາກວ່າ ຫົວໜ່ວຍທຸລະກິດຈຳໜ່າຍນ້ຳມັນເຊື້ອໄຟ (ປ້ຳນ້ຳມັນຂາຍຍ່ອຍ) ບໍ່ມາປັບປຸງເນື້ອໃນທະບຽນວິສາຫະກິດ ຫລື ຂຶ້ນທະບຽນວິສາຫະກິດຄືນໃໝ່ ຕາມແຈ້ງການສະບັບນີ້ພາຍໃນກຳນົດເວລາຕາມຂໍ້ 1 ເທິງນີ້ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ແຕ່ງຕັ້ງ ເຈົ້າໜ້າທີ່ກວດກາການຄ້າ ສົມທົບ ກັບຂະແໜງທະບຽນ ແລະ ຄຸ້ມຄອງວິສາຫະກິດ ລົງກວດກາຕົວຈິງ ແລະ ປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ;

3. ໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເກັບກຳຂໍ້ມູນສະຖິຕິ ສູນການຄ້າ ແລະ ຮ້ານສັບພະສິນຄ້າ ທີ່ຂຶ້ນທະບຽນວິສາຫະກິດ ແລະ ຍັງບໍ່ທັນໄດ້ຂຶ້ນທະບຽນວິສາຫະກິດ ພາຍໃນແຂວງ, ນະຄອນຫຼວງ ແລ້ວລາຍງານມາຍັງກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ ກ່ອນວັນທີ 20/10/2015.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມນີ້ດ້ວຍ.

ຫົວໜ້າຫ້ອງການ

ສົມຫວັງ ນິນທະວົງ

ບຳລີງ:

- ຫ້ອງການກະຊວງການເງິນ (ກົມສ່ວຍສາອາກອນ) ເພື່ອຊາບ ແລະ ຂໍຄວາມຮ່ວມມື.
- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ເພື່ອຊາບ ແລະ ປະຕິບັດ.